ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**
**ຄະນະປະຈຳ**

ເລກທີ 01 **/ຄປຈ**
ນະຄອນຫຼວງວຽງຈັນ, ວັນທີ 02 / 01 / 24

# ມະຕິ

## ຂອງ ຄະນະປະຈຳສະພາແຫ່ງຊາດ
## ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ວ່າດ້ວຍການໃຫ້ສັດຕະຍາບັນແກ່ຂໍ້ຕົກລົງຮັບຮູ້ເຊິ່ງກັນ ແລະ ກັນ ດ້ານມາດຕະຖານ ຜະລິດຕະພັນ ຍານພາຫະນະອາຊຽນ (ASEAN Mutual Recognition Arrangement on Type Approval for Automotive Products)

---

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2015, ມາດຕາ 56 ຂໍ້ 6 ກ່ຽວກັບສິດ ແລະ ໜ້າທີ່ ຂອງ ຄະນະປະຈຳສະພາແຫ່ງຊາດ ໃນການຕົກລົງໃຫ້ສັດຕະຍາບັນແກ່ ສົນທິສັນຍາ ແລະ ສັນຍາສາກົນ ຕາມການສະເໜີຂອງ ທ່ານ ນາຍົກລັດຖະມົນຕີ;
- ອີງຕາມ ໜັງສືສະເໜີຂອງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 54/ນຍ, ລົງວັນທີ 02 ສິງຫາ 2023;
- ອີງຕາມ ການຕົກລົງຂອງ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 25 ທັນວາ 2023.

## ຄະນະປະຈຳສະພາແຫ່ງຊາດຕົກລົງ:

**ມາດຕາ 1** ເຫັນດີໃຫ້ສັດຕະຍາບັນແກ່ ຂໍ້ຕົກລົງຮັບຮູ້ເຊິ່ງກັນ ແລະ ກັນ ດ້ານມາດຕະຖານຜະລິດຕະພັນ ຍານພາຫະນະອາຊຽນ (ASEAN Mutual Recognition Arrangement on Type Approval for Automotive Products);

**ມາດຕາ 2** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຄະນະປະຈຳສະພາແຫ່ງຊາດ**
**ປະທານ**

**ປອ ໄຊສົມພອນ ພົມວິຫານ**